# ແຜນການຈັດຕັ້ງປະຕິບັດ ນະໂຍບາຍ ເພື່ອພັດທະນາ ຂະແໜງການ ການເງິນຊົນນະບົດ ແລະ ການເງິນຈຸລະພາກ

1 ແຜນການປະຕິບັດງານແມ່ນບໍ່ທັນໄດ້ຮັບການປັບປຸງໃຫ້ທັນກັບພາບການ ຢ່າງເປັນທາງການ ແຕ່ທ້າຍ ປີ 2005. ບາງກິດຈະກຳກໍ່ຍັງສືບຕໍ່ ສ່ວນບາງກິດຈະກຳກໍ່ໄດ້ຢຸດສະຫງັກ. ເນື່ອງຈາກມີການອະນຸມັດ ໂຄງການພັດທະນາຂະແໜງການເງິນຊົນນະບົດ (RFSDP) ທີ່ສະໜອງທຶນໂດຍ ADB ໃນວັນທີ 17 ສິງຫາ 2006, ການລົງລາຍເຊັນໃນສັນຍາລະຫວ່າງ ADB ແລະ ລັດຖະບານ ໃນວັນທີ 30 ພະຈິກ 2006 ແລະ ມີຜົນນຳໃຊ້ໄດ້ໃນວັນທີ 12 ມີນາ 2007, ກອບໂຄງສ້າງການພັດທະນາແບບໃໝ່ ເພື່ອ ສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດເອກະສານນະໂຍບາຍ ແລະ ກຸ່ມກິດຈະກຳ ທີ່ໄດ້ຮັບການ ເຫັນດີຈຳນວນໜຶ່ງ ສຳລັບລັດຖະບານໃນຂະແໜງ RMF. ຄວາມເອົາໃຈໃສ່ ຂອງລັດຖະບານພາຍໃຕ້ RFSDP ໄດ້ສະແດງໃຫ້ເຫັນໂອກາດ ແລະ ຄວາມຈຳເປັນສຳລັບແຜນປະຕິບັດງານທີ່ຖືກປັບປຸງໃຫ້ ສອດຄ່ອງກັບສະພາບຄວາມເປັນຈິງ .

2 RFSDP ປະກອບດ້ວຍເງິນກູ້ມະຫາພາກ, ເງິນກູ້ໂຄງການ ແລະ ກິດຈະກຳການຊ່ວຍເຫລືອ ດ້ານວິຊາການຍ່ອຍອີກສາມຢ່າງ.

## ເງິນກູ້ມະຫາພາກ

3 ເວົ້າສະເພາະແລ້ວ ເງິນກູ້ມະຫາພາກແມ່ນແນ່ໃສ່ເພື່ອສົ່ງເສີມການພັດທະນາ ຂະແໜງການ ເງິນຊົນນະບົດ ແລະ ການເງິນຈຸລະພາກແບບຍືນຍົງ ແລະ ເນັ້ນໃສ່ກົນໄກຕະຫລາດ ໂດຍການຊ່ວຍລັດ ຖະບານຈັດຕັ້ງປະຕິບັດການປັບປຸງນະໂຍບາຍ ທີ່ຮວບຮວມຢູ່ໃນຍຸດທະສາດຂອງລັດຖະບານ ເພື່ອສົ່ງ ເສີມຂະແໜງການດັ່ງກ່າວ.

4 ເງິນກູ້ມະຫາພາກ (ເງິນກູ້ 2252) ມີຈຳນວນ 7.684 ລ້ານໂດລາ ແມ່ນເຊື່ອມໂຍງກັບສິ້ ຊີງເຂດການຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານ:

- ການສ້າງກອບນະໂຍບາຍທີ່ເອື້ອອຳນວຍໃຫ້ແກການສະໜອງດ້ານການເງິນຊົນນະບົດແລະຈຸ ລະພາກຂອງພາກລັດ ແລະ ພາກເອກະຊົນ;
- ການສ້າງບັນດາຂໍ້ກຳນົດວ່າດ້ວຍຄວາມໝັ້ນຄົງ ແລະ ສະພາບແວດລ້ອມດ້ານການຄຸ້ມຄອງ ສະຖາບັນການເງິນຈຸລະ ພາກຂອງທັງພາກລັດ ແລະ ເອກະຊົນ;
- ການປ່ຽນແປງທັນເອົາAPBໄປເປັນສະຖາບັນການເງິນຊົນນະບົດທີ່ກຸ້ມຕົນເອງທາງດ້ານການ ເງິນ, ເນັ້ນໃສ່ຕະຫລາດ; ແລະ

- ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ຂະແໜງການເງິນຊົນນະບົດ ແລະ ການເງິນຈຸລະພາກ ທີ່ບໍ່ໄດ້ຢູ່ພາຍໃຕ້ຂໍ້ກຳນົດວ່າດ້ວຍຄວາມໝັ້ນຄົງ.

5 ເງິນກູ້ບ້ວງທີໜຶ່ງພາຍໃຕ້ເງິນກູ້ມະຫາພາກໄດ້ຖືກເບີກຖອນແລ້ວ. ສ່ວນເງື່ອນໄຂສຳລັບການເບີກຖອນເງິນກູ້ບ້ວງທີສອງຕ້ອງປະຕິບັດໃຫ້ສຳເລັດກ່ອນເດືອນທັນວາ 2007 ແລະ ເງື່ອນໄຂສຳລັບເງິນກູ້ບ້ວງທີສາມ ແມ່ນກ່ອນເດືອນມິຖຸນາ 2009. ບັນດາການເບີກຖອນດັ່ງກ່າວຈະຖືກເບີກປ່ອຍບົນພື້ນຖານການປະຕິບັດໄດ້ຕາມບັນດາເງື່ອນໄຂເບີກຖອນເງິນກູ້ຂອງໂຄງການ. ອົງກອນທີ່ບໍລິຫານເງິນກູ້ ດັ່ງກ່າວ ແມ່ນທະນາຄານແຫ່ງ ສປປ ລາວ.

## ເງິນກູ້ໂຄງການ

6 ເງິນກູ້ໂຄງການ (ເງິນກູ້ 2253) ເນັ້ນໃສ່ເພື່ອສ້າງຄວາມເຂັ້ມແຂງດ້ານຂີດຄວາມສາມາດໃນການຄຸ້ມຄອງຂອງ BOL ແລະ ສະໜັບສະໜູນເຂົ້າໃນແຜນການປັບປຸງໂຄງສ້າງຂອງ APB. ອົງປະກອບຂອງເງິນກູ້ໂຄງການມີຄື:

- ການຊ່ວຍເຫລືອດ້ານວິຊາການໜຶ່ງໂຄງການ ເພື່ອສ້າງຂີດຄວາມສາມາດດ້ານການຄຸ້ມຄອງ MFI ຂອງ BOL ຊຶ່ງມີມູນຄ່າ 0,28 ລ້ານໂດລາ ຊຶ່ງສະໜອງທຶນໂດຍອົງການ FIRST;
- ອົງປະກອບການສ້າງຂີດຄວາມສາມາດ ພາຍໃຕ້ແຜນການປັບປຸງໂຄງສ້າງຂອງ APB ທີ່ມີມູນ ຄ່າປະມານ 1,2 ລ້ານໂດລາ ຊຶ່ງເນັ້ນໃສ່ການຄຸ້ມຄອງຄວາມສ່ຽງ, ການບັນຊີ ແລະ ICT; ແລະ
- ການປັບປຸງລະບົບ ICT ຂອງ APB ໃຫ້ທັນສະໄໝ ຊຶ່ງມີມູນຄ່າປະມານ 1.1 ລ້ານໂດລາ.

7 ເງິນກູ້ໂຄງການຖືກຈັດຕັ້ງປະຕິບັດຢູ່ໃນລະຫວ່າງປີ 2006 - 2010. APB ເປັນອົງກອນບໍລິຫານ ເງິນກູ້.

## ການຊວ່ຍເຫລືອດ້ານວິຊາການ (TA) ສຳລັບການພັດທະນາ MFI

8 TA (JFPR 9095 – ການກະຕຸກຊຸກຍູ້ການເງິນຈຸລະພາກໄປສູ່ຜູ້ທຸກຍາກ) ເນັ້ນໃສ່ ເພື່ອໃຫ້ການສະໜັບສະໜູນການພັດທະນາ ພາກເອກະຊົນທີ່ມີຄວາມຫລາກຫລາຍ ແລະ ສາມາດ ແຂ່ງຂັນສູງ, MFIs ແບບຍືນຍົງ ທີ່ດຳເນີນກິດຈະການບົນພື້ນຖານຫລັກການການປະຕິບັດທີ່ດີທີ່ສຸດ ແລະ ຮັບໃຊ້ຜູ້ທຸກຍາກ. ບັນດາອົງປະກອບຕ່າງໆມີຄື:

- ການສ້າງຕັ້ງກອງທຶນການເງິນຈຸລະພາກທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ BOL ($800,000) ເພື່ອສະໜອງທຶນສົມທົບ ເຊິ່ງເປັນເງິນຊ່ວຍເຫລືອລ້າສຳລັບທຶນເບື້ອງຕົ້ນ, ເຄື່ອງມື (ອຸປະ

ກອນ), ແລະ ການສ້າງຂີດຄວາມສາມາດຢູ່ໃນ MFIs ໃໝ່, ໜຸ່ມນ້ອຍ ແລະ ສະແດງໃຫ້ເຫັນໄດ້ຄວາມສຳເລັດ;

- ການສົ່ງເສີມການປະຕິບັດທີ່ດີທີ່ສຸດດ້ານການເງິນຈຸລະພາກ ໂດຍຜ່ານກອງປະຊຸມປຶກສາຫາລື ແລະ ການຝຶກອົບຮົມໃຫ້ແກ່ພະນັກງານຂອງ MFI ແລະ ພະນັກງານຂອງລັດ; ແລະ
- ການກະກຽມແຜນການ ເພື່ອສ້າງ MFI ໃນທົ່ວປະເທດ.

TA ຖືກຈັດຕັ້ງປະຕິບັດ ໃນ ລະຫວ່າງ ປີ 2007 ແລະ 2009. BOL ເປັນອົງກອນບໍລິຫານໂຄງການ.

## TA ສຳລັບຍົກລະດັບ ICT/MIS ຂອງ APB ທັນສະໄໝ

9 TA (JFICT 9096 – ການຍົກລະດັບ ICT ແລະ MIS ຢູ່ທະນາຄານສົ່ງເສີມກະສິກຳ) ໃນຈຳນວນປະມານ 472.000 ໂດລາ ໃນການໃຫ້ການສະໜັບສະໜູນດ້ານວິຊາການ ເພື່ອຈັດຕັ້ງປະຕິບັດການຍົກລະດັບ ICT ຂອງ APB ທີ່ໄດ້ຮັບທຶນຈາກເງິນກູ້ 2253. ໂຄງການຈະສະໜອງການຝຶກອົບຮົມດ້ານ ICT/MIS ແລະ ການສ້າງຂີດຄວາມສາມາດ ໃຫ້ແກ່ພະນັກງານຂອງ APB ໄປຄຽງຄູ່ກັນກັບການຈັດຊື້, ການຕິດຕັ້ງ ແລະ ການມອບໂອນລະບົບດັ່ງກ່າວ. APB ເປັນອົງກອນດຳເນີນໂຄງການ.

## TA ສຳລັບການສ້າງຄວາມເຂັ້ມແຂງດ້ານສະຖາບັນ

10 TA (4827LAO – ການສ້າງຄວາມເຂັ້ມແຂງດ້ານສະຖາບັນການເງິນຊົນນະບົດ) ປະມານ 700.000 ໂດລາ ເນັ້ນໃສ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນການປັບປຸງດ້ານນະໂຍບາຍ (ເງິນກູ້ 2252). ອົງປະກອບຄື:

- ຊ່ວຍ BOL ໃນການພັດທະນາດ້ານນະໂຍບາຍທີ່ເອື້ອອຳນວຍ ແລະ ຍຸດທະສາດສຳ ລັບການພັດທະນາຂະແໜງການເງິນຊົນນະບົດ ແລະ ການເງິນຈຸລະພາກ; ແລະ
- ຊ່ວຍປັບປຸງໂຄງສ້າງຂອງ APB ເພື່ອເຮັດໃຫ້ຖານະທາງການເງິນຂອງ ທສກ ເຂັ້ມແຂງຂຶ້ນກ່ວາເກົ່າ, ການດຳເນີນການແບບທຸລະກິດທີ່ເປັນເອກະລາດ ແລະ ມີການຂະຫຍາຍຕົວອອກໃນວົງກ້ວາງ.

11 TA ຈະຖືກຈັດຕັ້ງປະຕິບັດໃນລະຫວ່າງປີ 2007 ແລະ 2009. BOL ແລະ APB ແມ່ນອົງກອນບໍລິຫານທີ່ຮັບຜິດ ຊອບ TA ຕາມໜ້າທີ່ແຕກຕ່າງກັນ.

# ແຜນປະຕິບັດງານທີ່ໄດ້ຮັບການປັບປຸງ

12 ຕາຕະລາງ 1 ນຳສະເໜີແຜນປະຕິບັດງານທີ່ຖືກປັບປຸງ [ສະເໜີ] ແຕ່ກາງປີ 2007 ຫາທ້າຍປີ 2010. ແຜນປະຕິບັດງານຈະຖືກປັບປຸງເປັນລາຍເຄິ່ງປີ ແລະ ຈະຖືກປັບປຸງ ຕື່ມອີກເມື່ອຄວາມຕ້ອງການດ້ານການພັດທະນາຂອງຂະແໜງ RMF ປະກົດຊັດເຈນກ່ວາເກົ່າ. ການຈັດຕັ້ງກຸ່ມກິດຈະກຳພາຍໃຕ້ແຜນການປະຕິບັດງານທີ່ຖືກປັບປຸງ ແມ່ນສອດຄ່ອງກັບ ສາມອົງປະກອບຂອງບັນດາເງື່ອນໄຂທີ່ລັດຖະບານຈະໄດ້ຈັດ ຕັ້ງປະຕິບັດ ພາຍໃຕ້ໂຄງການ RFSDP . ອັນນີ້ຖືກຈັດໂຄງສ້າງດ້ວຍ:

- ການສ້າງກອບນະໂຍບາຍທີ່ເອື້ອອຳນວຍໃຫ້ແກ່ການສະໜອງດ້ານການເງິນຊົນນະບົດ ແລະ ຈຸລະພາກຂອງພາກລັດ ແລະ ພາກເອກະຊົນ;
- ການສ້າງບັນດາຂໍ້ກຳນົດວ່າດ້ວຍຄວາມໝັ້ນຄົງ ແລະ ສະພາບແວດລ້ອມດ້ານການຄຸ້ມຄອງສະ ຖາບັນການເງິນຈຸລະພາກຂອງທັງພາກລັດ ແລະ ເອກະຊົນ;
- ການປ່ຽນແປງທັນເອົາAPBໄປເປັນ ສະຖາບັນການເງິນຊົນນະບົດທີ່ກຸ້ມຕົນເອງທາງດ້ານການເງິນ ແລະ ເນັ້ນໃສ່ຕະຫລາດ;

ການສ້າງໂຄງສ້າງດ້ານນະໂຍບາຍທີ່ໃຫ້ອຳນາດແກ່ພາກລັດ ແລະ ເອກະຊົນໃນການສະໜອງທຶນ ເພື່ອການ ພັດທະນາຊົນນະບົດ ແລະ ການເງິນຈຸລະພາກ;

| ການປະຕິບັດການ | ທີ່ຮັບຜິດຊອບບາງສ່ວນ | ການສະໜັບສະໜູນ TA (ຊີ້ບອກໂດຍການໝາຍ) | ປີ / ໄຕມາດ | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | 2007 | | 2008 | | | | 2009 | | | | 2010 | | | |
| | | | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| ການລວມແຜນປະຕິບັດງານເຂົ້າໃນຍຸດທະສາດຂອງຂະແໜງການເງິນ | BOL | ADB 4827/4002 | | | | | | | | | | | | | | |
| ການນຳມາປະຍຸກໃຊ້ ແລະ ການພິມເຜີຍແຜ່ຍຸດທະສາດຂອງຂະແໜງການເງິນ | BOL | ADB 4002 | | | | | | | | | | | | | | |
| ການທົບທວນ ແລະ ປັບປຸງແຜນປະຕິບັດງານເປັນໄລຍະ | BOL | ADB 4827 | | | | | | | | | | | | | | |
| ການໃຫ້ຄຳປຶກສາແກ່ຜູ້ຈະໄດ້ຮັບຜົນປະໂຫຍດປະຈຳເຄິ່ງປີກ່ຽວກັບນະໂຍບາຍ ແລະ ແຜນປະຕິບັດງານ | BOL | ADB 4827 | | | | | | | | | | | | | | |

**ການສ້າງລະບຽບການທີ່ຄຳນຶງເຖິງຜົນກະທົບຢ່າງຮອບຄອບ ແລະ ສະພາບແວດລ້ອມດ້ານການຊີ້ນຳໃຫ້ແກ່ສະຖາບັນການເງິນຈຸລະພາກຂອງທັງພາກລັດ ແລະ ເອກະຊົນ**

| ການປະຕິບັດການ | ທີ່ຮັບຜິດຊອບບາງສ່ວນ | ການສະໜັບສະໜູນTA (ຊີ້ບອກໂດຍການໝາຍ) | ປີ / ໄຕມາດ | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | 2007 | | 2008 | | | | 2009 | | | | 2010 | | | |
| | | | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| ສ້າງລະບຽບຂອງ SCU ແລະ MFI ໃຫ້ສຳເລັດ, ກົດລະບຽບຂອງທ້ອງຖິ່ນ ແລະ ຂໍ້ແນະນຳ | BOL | FIRST 213 | | | | | | | | | | | | | | |
| ການໃຫ້ຄຳປຶກສາແກ່ຜູ້ທີ່ຈະໄດ້ຮັບຜົນປະໂຫຍດປະຈຳເຄິ່ງປີກ່ຽວກັບການຈັດຕັ້ງປະຕິບັດ | BOL | ADB 4827 | | | | | | | | | | | | | | |
| ອອກລະບຽບກ່ຽວກັບ CBs ເພື່ອສ້າງການຄ້ຳປະກັນກຸ່ມເງິນກູ້ຂອງ MF | BOL | | | | | | | | | | | | | | | |
| ການຕິດຕາມຢູ່ນອກສະຖານທີ່ APB, MFIs and SCUs ປະຈຳເດືອນ | BOL | | | | | | | | | | | | | | | |
| ການກວດກາກັບທີ່ APB, MFIs ແລະ SCUs ປະຈຳເຄິ່ງປີ | BOL | FIRST 213 | | | | | | | | | | | | | | |
| ການສົ່ງເສີມການຄຸ້ມຄອງ MFI ສະເພາະດ້ານ | BOL | ADB 9095 | | | | | | | | | | | | | | |

ການປຸ່ງນ APB ໃຫ້ເປັນສະຖາບັນການເງິນຊົນນະບົດທີ່ກຸ້ມຕົນເອງດ້ານການເງິນ, ເນັ້ນໃສ່ຕະຫລາດ;

| ການປະຕິບັດງານ | ທີ່ຮັບຜິດຊອບບາງສ່ວນ | ການສະໜັບສະໜູນTA (ຊີ້ບອກໂດຍການໝາຍ) | ປີ / ໄຕມາດ | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | 2007 | | 2008 | | | | 2009 | | | | 2010 | | | |
| | | | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| ການຮັກສາການປະຕິບັດສັນຍາການຄຸ້ມຄອງໂຄງການ | APB/BOL/MOF | ADB 4827 | | | | | | | | | | | | | | |
| ການລົບລ້າງໜີ້ສູນຂອງ APB | APB/BOL | | | | | | | | | | | | | | | |
| ການປະຕິບັດເປົ້າໝາຍຂອງ APB | APB/BOL/MOF | ADB 4827 | | | | | | | | | | | | | | |
| MOF ປັບປຸງໂຄງສ້າງເງິນທຶນໃຫ້ແກ່ APB | MOF | | | | | | | | | | | | | | | |
| APB ດຳເນີນການປະເມີນຜົນການປະຕິບັດງານປະຈຳເຄິ່ງປີ | APB | | | | | | | | | | | | | | | |
| APB ປະຍຸກໃຊ້ ແລະ ຮັກສາການປະຕິບັດງານທີ່ດີທີ່ສຸດດ້ານ HR, ສິນເຊື່ອ ແລະ ການກຳນົດລາຄາ | APB | ADB 4827 | | | | | | | | | | | | | | |
| APB ກະກຽມ, ອະນຸມັດ ແລະ ຮັບເອົາແຜນການ 3 ປີຂອງບໍລິສັດ | APB | ADB 4827 | | | | | | | | | | | | | | |